# ການຂຶ້ນແຜນວຽກປະຈຳປີ
# &
# ການລາຍງານຂອງໜ່ວຍງານຂະແໜງການ

22-24 ພຶດສະພາ 2024, ທີ່ເມືອງທຸລະຄົມ, ແຂວງວຽງຈັນ

ນຳສະເໜີໂດຍ: ພະແນກ ອົງການຈັດຕັ້ງສາກົນ,
ກົມຮ່ວມມືສາກົນ
ກະຊວງແຜນການ ແລະ ການລົງທຶນ

# ຫົວຂໍ້ນຳສະເໜີ

1. ຄວາມເປັນມາ
2. ຈຸດປະສົງ
3. ການຂຶ້ນແຜນວຽກປະຈຳປີ
4. ການລາຍງານ

   4.1 ການລາຍງານຜົນການປຶກສາຫາລື ໜ່ວຍງານຂະແໜງການ ແລະໜ່ວຍຂະແໜງການຍ່ອຍ;

   4.2 ແບບຟອມລາຍງານຂອງໜ່ວຍງານຂະແໜງການ;

# 1. ຄວາມເປັນມາ

- ໜ່ວຍງານຂະແໜງການ ແມ່ນກົນໄກໜຶ່ງທີ່ສໍາຄັນ ຂອງຂະບວນໂຕະມົນ ທີ່ຊ່ວຍສະໜັບສະໜູນການປຶກສາຫາລືຮ່ວມກັນ ລະຫວ່າງ ລັດຖະບານ ສປປ ລາວ ທັງສູນກາງ ແລະທ້ອງຖິ່ນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ຜູ້ຕາງໜ້າສະພາແຫ່ງຊາດ ແລະສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ແລະພາກສ່ວນອື່ນໆ ໃນການປຶກສາຫາລືແລກປ່ຽນກ່ຽວກັບບັນດາວາລະການພັດທະນາ ແຫ່ງຊາດ ທີ່ສໍາຄັນ, ການລະດົມແຫຼ່ງທຶນ ແລະ ການຮັບປະກັນການປະສານງານ ແລະການເປັນຄູ່ຮ່ວມມື ຢ່າງມີປະສິດທິຜົນ, ການຕິລາຄາ, ການປະເມີນຜົນ, ຕິດຕາມກວດກາ ແລະການລາຍງານ ເພື່ອໃຫ້ສອດຄ່ອງ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ທິດທາງການພັດທະນາຂອງ ສປປ ລາວ.
- ໜ່ວຍງານຂະແໜງການ ມີພາລະບົດບາດໃນການຊ່ວຍກອງເລຂາຂະບວນການໂຕະມົນ ໃນການສ້າງຂີດຄວາມສາມາດ ແລະ ສຸມໃສ່ສ້າງຄວາມເຂັ້ມແຂງໃຫ້ກັບຂະບວນການໂຕະມົນ ເພື່ອຮັບປະກັນປະສິດທິພາບໃນການຈັດຕັ້ງປະຕິບັດຂະບວນການໂຕະມົນ.

# 2. ຈຸດປະສົງ

- ໜ່ວຍງານຂະແໜງການ (SWG)s ເປັນເວທີໜຶ່ງໃນການປະສານງານທີ່ສຳຄັນ ລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ສໍາລັບວຽກງານການພັດທະນາ ໃນ ສປປ ລາວ.
- ໜ່ວຍງານຂະແໜງການ ຈະສະໜັບສະໜູນໃນການ ຈັດຕັ້ງ ແລະ ຜັນຂະຫຍາຍກ່ຽວກັບບັນດາບຸລິມະສິດການພັດທະນາ ບົນພື້ນຖານ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ ແລະ ນະໂຍບາຍຕ່າງໆ ເພື່ອໃຫ້ການຮ່ວມມືເພື່ອການພັດທະນາມີປະສິດທິຜົນຂຶ້ນກວ່າເກົ່າ.
- ໜ່ວຍງານຂະແໜງການ (SWG)s ແມ່ນນຳພາໂດຍກະຊວງຂະແໜງການຂອງ ລັດຖະບານ ແລະ ຕາງ ໜ້າຈາກບັນດາຄູ່ຮ່ວມພັດທະນາ ລວມມີ 10 ຂະແໜງການ, ແຕ່ລະໜ່ວຍງານຈະມີ 2 ຫາ 3 ຜູ້ຕາງໜ້າຈາກບັນດາຄູ່ມຮ່ວມພັດທະນາ.
- ໜ່ວຍງານຂະແໜງການປະກອບມີ: ໜ່ວຍງານຂະແໜງການເສດຖະກິດມະຫາພາກ, ສາທາລະນະສຸກ, ສຶກສາ, ພື້ນຖານໂຄງລ່າງ, ການປົກຄອງ, ການຄ້າ ແລະ ພາກເອກະຊົນ, ກະສິກຳ ແລະ ພັດທະນາຊົນນະບົດ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄວບຄຸມຢາເສບຕິດ, ແລະ ເກັບກູ້ລະເບີດບໍ່ທັນແຕກ

# 3. ການຂຶ້ນແຜນວຽກປະຈຳປີ

- ❑ ຊື່ໜ່ວຍງານຂະແໜງການຂອງຕົນ.
- ຕົວຢ່າງ: ໜ່ວຍງານຂະແໜງການເສດຖະກິດມະຫາພາກ, ກົມແຜນການ ກະຊວງແຜນການ ແລະການລົງທຶນ.

- ❑ ບັນຫາທີ່ເປັນບູລິມະສິດຂອງໜ່ວຍງານຂະແໜງການປະຈຳປີ.
- ຕົວຢ່າງ: ຢ່າງໜ້ອຍ ກຳນົດ ເອົາ 2-3 ບັນຫາທີ່ເຫັນວ່າຄວນຕ້ອງແກ້ໄຂພາຍໃນປີ.

- ❑ ຄາດຄະເນຜົນໄດ້ຮັບ ທີ່ຈະຊ່ວຍປະກອບສ່ວນເຂົ້າໃນ ແຜນພັດທະນາເສດກະກິດ-ສັງຄົມ ແຫ່ງຊາດ ແຕ່ລະໄລຍະ.
- ຕົວຢ່າງ: ລະບຸປະເພດຂອງຜົນໄດ້ຮັບ ພ້ອມທັງອະທິບາຍວິທີການຄາດຄະເນຜົນໄດ້ຮັບ

# 3. ການຂຶ້ນແຜນວຽກປະຈຳປີ (ຕໍ່)

- ❑ ຕົວຊີ້ວັດທີ່ຈະຊ່ວຍຕິດຕາມຄວາມຄືບໜ້າຂອງບັນຫາບູລິມະສິດ
- ຕົວຢ່າງ: ກຳນົດຮູບແບບ ແລະ ວິທີການຂອງການປະເມີນຜົນ ຂອງຕົວຊີ້ວັດທີ່ຈະຕິດຕາມຄວາມຄືບໜ້າຂອງບັນຫາບູລິມະສິດ
- ❑ ຕາຕະລາງແຜນກິດຈະກຳ ແລະຜູ້ປະສານງານທີ່ກ່ຽວຂ້ອງໜ່ວຍງານຂະແໜງ ແລະຂະແໜງການການຍ່ອຍ
- ຕົວຢ່າງ:

1)

| ກຳນົດເວລາ | ກອງປະຊຸມ | ຫົວຂໍ້ປຶກສາຫາລືຕົ້ນຕໍ / ການຈັດຕັ້ງປະຕິບັດ |
|---|---|---|
| ທ້າຍເດືອນກຸມພາ | ການປຶກສາຫາລືທີ່ບໍ່ເປັນທາງການລະຫວ່າງປະທານ ແລະ ປະທານຮ່ວມ | • ຮ່າງແຜນການເຮັດວຽກປະຈຳປີ |

**ລາຍຊື່ຕິດຕໍ່ຂອງ** ໜ່ວຍງານຂະແໜງການ **(SWG):**

2)

| ຊື່ | ຫົວຂໍ້ | ອົງການຈັດຕັ້ງ | ໂທ | ອີເມວ | ຫມາຍເຫດ |
|---|---|---|---|---|---|
| ນາງ XXXX | ຫົວໜ້າພະແນກຮ່ວມມືສາກົນ | ກະຊວງ ຖວທ | 020 - | XXXX | ກອງເລຂາ ໜ່ວຍງານຂະແໜງການ (SWG) (ປະທານ) |

# 4. ການລາຍງານ

### 3.1 ການລາຍງານຜົນການປຶກສາຫາລື ໜ່ວຍງານຂະແໜງການ ແລະໜ່ວຍຂະແໜງ ການຍ່ອຍ

- ❑ ຊື່ໜ່ວຍງານຂະແໜງການ ຫລື ໜ່ວຍງານຂະແໜງການຍ່ອຍ
- ❑ ຊື່ກອງປະຊຸມ, ວັນທີ, ຈຳນວນ ແລະຊື່ພາກສ່ວນຜູ້ເຂົ້າຮ່ວມ
- ❑ ຫົວຂໍທີ່ໄດ້ປຶກສາຫາລື: ຫົວຂໍ້ 1, 2, 3...........
- ❑ ຕາຕະລາງແຜນຄາດຄະເນຂອງກດຈະກຳທີ່ຈະຈັດຂຶ້ນໃນຕໍ່ໜ້າ ແລະຫົວຂໍ້ປຶກສາຫາລື

# 4. ການລາຍງານ

## 3.2 ແບບຟອມລາຍງານ ໜ່ວຍງານຂະແໜງການ

❑ ຂໍ້ມູນລວມ:

- ຊື່ໜ່ວຍງານຂະແໜງການ
- ຊື່ ແລະ ຕຳແໜ່ງປະທານ ແລະ ປະທານຮ່ວມ
- ຊື່ຫົວໜ້າກອງເລຂາ
- ຊື່ກອງເລຂາ ຝ່າຍລັດຖະບານ ແລະ ຜູ້ໃຫ້ທຶນ

❑ ຈຸດປະສົງ ແລະ ເປົ້າໝາຍຂອງໜ່ວຍງານຂະແໜງການຂອງທ່ານ ໃນປີ 20XX (1/2 ໜ້າ)

❑ ຜົນໄດ້ຮັບ ແລະ ຜົນສຳເລັດຂອງໜ່ວຍງານຂະແໜງການຂອງທ່ານ ທຽບໃສ່ ຄຳແນະນຳຂອງບົດລາຍງານກອງປະຊຸມໂຕະມົນປີ 20XX ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ເປົ້າໝາຍການພັດທະນາແບບຍືນຍົງ ແລະ ຍຸດທະສາດຂອງຂະແໜງການ ມີຄືແນວໃດ? (1-2 ໜ້າ

# 4. ການລາຍງານ (ຕໍ່)

## 3.2 ແບບຟອມລາຍງານ ໜ່ວຍງານຂະແໜງການ

- A. ອີງຕາມຄຳແນະນຳຂອງການປະເມີນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, ວຽກງານບູລິມະສິດຂອງໜ່ວຍງານຂະແໜງການຂອງທ່ານ ສຳລັບປີ 2024 ຄາດວ່າຈະມີຫຍັງແນ່? (1 ໜ້າ)
- B. ອີງຕາມຄຳແນະນຳຂອງການປະເມີນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, ວຽກງານບູລິມະສິດຂອງໜ່ວຍງານຂະແໜງການຂອງທ່ານ ຄາດວ່າຈະປະກອບສ່ວນເຂົ້າໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ໄດ້ຄືແນວໃດ? (1/2 ໜ້າ)
- ບົດຮຽນທີ່ທ່ານສາມາດຖອດຖອນໄດ້ສຳລັບໜ່ວຍງານຂະແໜງການຂອງທ່ານ ທຽບໃສ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ໃນໄລຍະ 2 ປີເຄິ່ງທີ່ຜ່ານມາ ມີຫຍັງແນ່? (1/2 ໜ້າ)
- ໝາຍເຫດ: ແບບຟອມບົດລາຍງານສະບັບນີ້ ແມ່ນບົດລາຍງານຮ່ວມ ລະຫວ່າງປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການ.

# ຂໍຂອບໃຈ